ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ຊາວໜຸ່ມຮາກຖານ ທຫລ ຈັດສຳມະນາວຽກງານ ສະຖິຕິດຸນການຊຳລະກັບຕ່າງປະເທດ




ໃນວັນທີ 14 ພະຈິກ 2018 ຊາວໜຸ່ມຮາກຖານທະນາຄານແຫ່ງ ສປປ ລາວ (ທຫລ) ຈັດສຳມະນາພາຍໃຕ້ຫົວຂໍ້ "ວຽກງານສະຖິຕິດຸນການຊຳລະກັບຕ່າງປະເທດ" ເຊິ່ງຈັດຂຶ້ນທີ່ຫ້ອງປະຊຸມໃຫຍ່ ທຫລ ໂດຍມີບັນດາສະມາຊິກຈາກບັນດາໜ່ວຍຊາວໜຸ່ມພາຍໃນ ທຫລ ເຂົ້າຮ່ວມ.

ການຈັດສຳມະນາໃນລັກສະນະນີ້ ໄດ້ຈັດຂຶ້ນມາຫຼາຍຄັ້ງແລ້ວ ເຊິ່ງເທື່ອກ່ອນໄດ້ມີການສຳມະນາກ່ຽວກັບນິຕິກຳຂອງ ທຫລ ແລະ ໃນເທື່ອນີ້ ໄດ້ເປັນວຽກງານວິຊາສະເພາະ ໂດຍມີຜູ້ບັນຍາຍມາຈາກໜ່ວຍຊາວໜຸ່ມກົມນະໂຍບາຍເງິນຕາ ແລະ ໄດ້ນຳສະເໜີພາບລວມ ແລະ ການຈັດຕັ້ງເຄື່ອນໄຫວວຽກງານສະຖິຕິດຸນການຊຳລະໃນໄລຍະຜ່ານມາ.

ວຽກງານສະຖິຕິດຸນການຊຳລະກັບຕ່າງປະເທດເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ຊຶ່ງມັນຈະຊ່ວຍສະໜອງບັນດາຂໍ້ມູນລາຍລະອຽດຕ່າງໆກ່ຽວກັບຄວາມຕ້ອງການ, ຂອບການສະໜອງເງິນຕາພາຍໃນປະເທດ ແລະ ຮູ້ໄດ້ເຖິງການໄຫຼເຂົ້າ-ອອກເງິນຂອງຕາຕ່າງປະເທດ; ພ້ອມນັ້ນ, ຍັງຍົກໃຫ້ເຫັນຂໍ້ມູນການນຳເຂົ້າ-ສົ່ງອອກສິນຄ້າ, ການບໍລິການ, ການລົງທຶນ ແລະ ການໂອນເງິນ ແມ່ນເປັນຂໍ້ມູນທີ່ສຳຄັນ ທີ່ຈະຊ່ວຍໃຫ້ຜູ້ວາງນະໂຍບາຍສາມາດກຳນົດທິດທາງ ແລະ ນະໂຍບາຍເສດຖະກິດ, ການເງິນ ແລະ ເງິນຕາ ໄດ້ຢ່າງເໝາະສົມກັບສະພາບຄວາມເປັນຈິງ ແລະ ບັນດາຂໍ້ມູນຕ່າງໆທີ່ຈະເປັນພື້ນຖານໃນການສ້າງເງື່ອນໄຂສະໜັບສະໜູນຫົວໜ່ວຍທຸລະກິດໃຫ້ມີປະສິດທິພາບໃນການແຂ່ງຂັນຍິ່ງຂຶ້ນ.

**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**